**ອາທິດທີ 14 ກຳນົດທຳມະດາ ປີ B**

**ວັນທີ 4 ກໍລະກົດ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 6, 1-6**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປບ້ານເກີດຂອງພຣະອົງ. ພວກສາວົກກໍຕິດຕາມໄປດ້ວຍ. ພໍເຖິງວັນເສົາ, ພຣະອົງກໍລົງມືສັ່ງສອນຢູ່ໃນໂຮງທຳຄົນທັງຫລາຍທີ່ມາຟັງກໍມີຄວາມແປກປະຫລາດໃຈເວົ້າກັນວ່າ: “ເພິ່ນຮູ້ເລື້ອງເຫລົ່ານີ້ມາແຕ່ໃສ? ຄວາມຮູ້ຄວາມສະຫລາດນີ້ແມ່ນໃຜປະທານໃຫ້ເພິ່ນ? ແລະການມະຫັດສະຈັນທີ່ເພິ່ນທຳນັ້ນແມ່ນຢ່າງໃດ? ເພິ່ນບໍ່ແມ່ນຊ່າງໄມ້ບຸດຂອງນາງມາຣີບໍ, ບໍ່ແມ່ນພີ່ນ້ອງກັບຢາໂກເບ, ຢໍແຊ, ຢູດາ ແລະຊີມອນບໍ? ແລະພວກອ້າຍນ້ອງຂອງເພິ່ນບໍ່ແມ່ນຢູ່ບ້ານດຽວກັບພວກເຮົາບໍ?” ພວກເຂົາເລີຍຖືເອົາພຣະອົງເປັນສະດຸດ.

ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ: “ປະພາສົກບໍ່ມີໜ້າມີຕາຢູ່ໃນບ້ານເກີດ, ໃນຄອບຄົວແລະຢູ່ເຮືອນຂອງຕົນ”. ແລ້ວພຣະອົງກໍບໍ່ໄດ້ກະທຳການອັດສະຈັນຢ່າງໃດ. ພຣະອົງໄດ້ປິ່ນປົວຄົນເຈັບລາງຄົນ ແລະປົກມືໃຫ້ເຂົາ. ພຣະອົງມີຄວາມແປກປະຫລາດພຣະໄທຍ້ອນເຫັນພວກເຂົາຂາດຄວາມເຊື່ອ. ແລ້ວກໍສະເດັດໄປສັ່ງສອນຕາມໝູ່ບ້ານທີ່ຢູ່ໃກ້ໆ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 6, 1-6**

ວາຈາພຣະເຈົ້າໃນວັນອາທິດນີ້ ເຕັມໄປດ້ວຍຄຳຖາມຂອງຝູງຊົນທີ່ມາຟັງພຣະເຢຊູເຈົ້າເທດສອນໃນໂຮງທັມຢູ່ບ້ານເກີດຂອງພຣະອົງ. ຍ້ອນຄຳເທດສອນຂອງພຣະເຢຊູເຈົ້າແຕກຕ່າງໄປຈາກພວກນັກປາດແລະອາຈານພຣະຄຳພີ. ດັ່ງນັ້ນພວກເຂົາຈຶ່ງມີຄວາມແປກປະຫລາດໃຈ. ແຕ່ສິ່ງທີ່ແປກປະຫລາດໃຈກວ່ານັ້ນກໍຄື ຝູງຊົນຄິດວ່າພວກເຂົາຮູ້ຈັກພຣະເຢຊູເຈົ້າດີ. ເພາະພຣະອົງກໍເປັນຄົນສາມັນແລະເປັນໄທບ້ານດຽວກັບພວກເຂົາ. ຄວາມຄິດນີ້ເຮັດໃຫ້ຝູງຊົນຢຸດຢູ່ແຕ່ສິ່ງທີ່ພວກເຂົາເຫັນແລະພວກເຂົາຮູ້. ແລະບໍ່ພະຍາຍາມຊອກຫາເພື່ອຮູ້ຈັກແລະເຂົ້າໃຈຄຳເທດສອນແລະກິດຈະການອັດສະຈັນທີ່ພຣະເຢຊູເຈົ້າໄດ້ຊົງກະທຳ. ແທນທີ່ພຣະເຢຊູເຈົ້າຈະເປັນທີ່ຮູ້ຈັກສຳລັບເພື່ອນບ້ານມິດສະຫາຍຂອງພຣະອົງ, ພຣະອົງກັບກາຍເປັນຄົນທີ່ບໍ່ມີໃຜຮູ້ຈັກ. ແທນທີ່ຜູ້ຄົນທີ່ມາຟັງພຣະເຢຊູເຈົ້າເທດສອນເປີດໃຈເພື່ອຮັບເອົາວາຈາຂອງພຣະອົງ, ພວກເຂົາພັດປິດໃຈຕົວເອງໄວ້ແລະບໍ່ເຊື່ອໃນພຣະອົງ. ດັ່ງນັ້ນພຣະເຢຊູເຈົ້າບໍ່ສາມາດກະທຳອັດສະຈັນແຕ່ຢ່າງໃດເລີຍ. ສິ່ງເຫລົ່ານີ້ສະທ້ອນໃຫ້ພວກເຮົາເຫັນຫຍັງ? ແລະຢາກສອນພວກເຮົາຫຍັງໃນຊີວິດກຣິສຕັງຂອງພວກເຮົາ?

ໃນຊີວິດຄວາມເຊື່ອຂອງພວກເຮົາ, ເປັນຕົ້ນບັນດາຜູ້ທີ່ໄດ້ຮັບຄວາມເຊື່ອມາຈາກປູ່ຍ່າຕານາຍ, ຈາກພໍ່ແມ່ທີ່ເປັນກຣິສຕັງເດີມ, ພວກເຮົາຄິດວ່າພວກເຮົາຮູ້ຈັກພຣະເຢຊູເຈົ້າພຽງພໍຜ່ານທາງຄຳສອນກຣິສຕັງທີ່ພວກເຮົາສຶກສາແລະໄດ້ຮັບການຖ່າຍທອດຈາກພໍ່ແມ່, ປູ່ຍ່າຕານາຍຂອງພວກເຮົາ. ສິ່ງນີ້ເຮັດໃຫ້ພວກເຮົາຢຸດຢູ່ແຕ່ສິ່ງທີ່ພວກເຮົາຮູ້ແລະເຫັນ. ແລະພວກເຮົາບໍ່ຢາກສືບຕໍ່ໃນການຊອກຫາພຣະເຢຊູເຈົ້າຕື່ມອີກໃນວາຈາຂອງພຣະອົງ. ຜົນທີ່ຕາມມາກໍຄືຊີວິດຄວາມເຊື່ອຂອງພວກເຮົາຈະຄ່ອຍຫ່ຽວແຫ້ງໄປ ແລະດວງໃຈຂອງພວກເຮົາກໍຈະຄ່ອຍແຂງກະດ້າງຂຶ້ນ. ເພາະພວກເຮົາບໍ່ໄດ້ຮັບການຫລໍ່ລ້ຽງດ້ວຍວາຈາຂອງພຣະເຈົ້າ. ສິ່ງນີ້ບໍ່ພຽງແຕ່ເປັນອຸປະສັກເຮັດໃຫ້ພວກເຮົາຫ່າງໄກຈາກພຣະເຈົ້າເທົ່ານັ້ນ, ແຕ່ຍັງເຮັດໃຫ້ພວກເຮົາຫ່າງໄກຈາກເພື່ອນພີ່ນ້ອງຂອງພວກເຮົາອີກດ້ວຍ. ຍ້ອນຫຍັງ? ຍ້ອນຖ້າພວກເຮົາເຊື່ອໃນສິ່ງທີ່ພວກເຮົາເຫັນພາຍນອກເທົ່ານັ້ນ, ພວກເຮົາກໍຈະເບິ່ງແລະຕັດສິນຄົນອື່ນໃນສິ່ງທີ່ພວກເຮົາເຫັນແລະສຳພັດໄດ້ພາຍນອກເຊັ່ນດຽວກັນ. ສິ່ງນີ້ເຮັດໃຫ້ພວກເຮົາບໍ່ສາມາດຄົ້ນພົບຄວາມຈິງ, ຄວາມດີແລະຄວາມງາມຂອງບຸກຄົນທີ່ພວກເຮົາພົບໃນຊີວິດຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ, ຂໍໃຫ້ວາຈາຂອງພຣະອົງວັນນີ້ຊ່ວຍພວກເຮົາໃຫ້ມີຄວາມຄິດແລະຄວາມເຂົ້າໃຈນັບມື້ນັບເລິກເຊິ່ງຂຶ້ນໃນຕົວຂອງພຣະອົງຜ່ານທາງວາຈາຂອງພຣະອົງ. ເພື່ອພວກເຮົາຈະບໍ່ຕັດສິນຄົນອື່ນໃນສິ່ງທີ່ພວກເຮົາເຫັນພາຍນອກ ແຕ່ໃນຄຸນງາມຄວາມດີແລະໃນສິ່ງທີ່ເຂົາເປັນຢ່າງແທ້ຈິງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ